ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ

ເລກທີ 0034 /ກວຕ.

ນະຄອນຫຼວງວຽງຈັນ, ວັນທີ 20 JAN 2021

# ຂໍ້ຕົກລົງ
# ວ່າດ້ວຍແບບຜັງວົງຈອນລວມ

- ອີງຕາມ ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ) ສະບັບເລກທີ 38/ສພຊ , ລົງວັນທີ 15 ພະຈິກ 2017;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ສະບັບເລກທີ 314/ນຍ, ລົງວັນທີ 29 ກັນຍາ 2017;
- ອີງຕາມ ໜັງສືສະເໜີ ຂອງກົມຊັບສິນທາງປັນຍາ ສະບັບເລກທີ 219/ກວຕ.ກຊປ, ລົງວັນທີ 13 ມັງກອນ 2021.

## ລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບການຈັດຕັ້ງປະຕິບັດວຽກງານແບບຜັງວົງຈອນລວມ ເປັນຕົ້ນ ການຈົດທະບຽນແບບຜັງວົງຈອນລວມ, ການດຳເນີນຫຼັງການຈົດທະບຽນ, ການເປັນຜູ້ຕາງໜ້າ, ການທົບທວນຄືນທາງດ້ານບໍລິຫານ ແລະ ອົງການຄຸ້ມຄອງວຽກງານແບບຜັງວົງຈອນລວມ ເພື່ອຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ກ່ຽວກັບແບບຜັງວົງຈອນລວມ ໃຫ້ເປັນເອກະພາບ ໃນຂອບເຂດທົ່ວປະເທດ.

**ມາດຕາ 2 ແບບຜັງວົງຈອນລວມ**

ແບບຜັງວົງຈອນລວມ ແມ່ນການຈັດວາງວົງຈອນລວມທີ່ສະແດງອອກໃນຮູບສາມມິຕິໃດກໍຕາມ ຊຶ່ງຢ່າງໜ້ອຍມີສ່ວນປະກອບໜຶ່ງທີ່ໃຊ້ການໄດ້ ແລະ ສ່ວນເຊື່ອມຕໍ່ບາງສ່ວນ ຫຼື ທັງໝົດ ຂອງວົງຈອນລວມ ຫຼື ການຈັດວາງວົງຈອນລວມໃນຮູບແບບສາມມິຕິເຫຼົ່ານັ້ນເຮັດຂຶ້ນມາເປັນວົງຈອນລວມ ທີ່ມີຈຸດປະສົງສຳລັບການຜະລິດໃນອຸດສາຫະກຳເອເລັກໂຕຣນິກ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ຜູ້ຮ້ອງຂໍ** ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຍື່ນຄຳຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ,ດັດແກ້ ຫຼື ຂໍຍົກເລີກບາງສ່ວນ ຫຼື ທັງໝົດ, ການຈົດທະບຽນແບບຜັງວົງຈອນລວມ ຫຼື ຜູ້ສືບທອດຜົນປະໂຫຍດຂອງບຸກຄົນດັ່ງກ່າວ;
2. **ຄຳຮ້ອງ** ໝາຍເຖິງສຳນວນເອກະສານການຍື່ນຄຳຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ, ດັດແກ້, ຍົກເລີກບາງສ່ວນ ຫຼື ທັງໝົດ, ການຈົດທະບຽນແບບຜັງວົງຈອນລວມ;
3. **ຜູ້ຄັດຄ້ານ** ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ສະເໜີຂໍຄັດຄ້ານການຂໍຈົດທະບຽນແບບຜັງວົງຈອນລວມ;
4. **ການຄັດຄ້ານ** ໝາຍເຖິງບຸກຄົນທີສາມທີ່ໄດ້ລະບຸໄວ້ໃນຂໍ້ 3 ຂ້າງເທິງນີ້ ທີ່ໄດ້ຍື່ນຄຳສະເໜີຂໍຄັດຄ້ານຕໍ່ການຂໍຈົດທະບຽນແບບຜັງວົງຈອນລວມ ທີ່ໄດ້ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ;
5. **ການຍົກເລີກ** ໝາຍເຖິງການຍື່ນຄຳຮ້ອງຂໍຍົກເລີກການຈົດທະບຽນແບບຜັງວົງຈອນລວມ ບາງສ່ວນ ຫຼື ທັງໝົດໂດຍເຈົ້າຂອງເອງ ຫຼື ບຸກຄົນທີສາມ ທີ່ຍື່ນຄຳຮ້ອງຂໍຍົກເລີກການຈົດທະບຽນແບບຜັງວົງຈອນລວມ ບາງສ່ວນຫຼື ທັງໝົດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 44 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ;
6. **ການລົບລ້າງ** ໝາຍເຖິງບຸກຄົນທີສາມ ທີ່ຍື່ນຄຳສະເໜີຂໍລົບລ້າງການຈົດທະບຽນແບບຜັງວົງຈອນລວມທັງໝົດ;
7. **ວົງຈອນລວມ** ໝາຍເຖິງຜະລິດຕະພັນສຳເລັດຮູບ ຫຼື ເຄິ່ງສຳເລັດຮູບ ຊຶ່ງສ່ວນປະກອບຕ່າງໆ ຂອງຜະລິດຕະພັນ ແມ່ນສ່ວນປະກອບທີ່ໃຊ້ການໄດ້ ແລະ ສ່ວນທີ່ເຊື່ອມຕໍ່ກັບບາງສ່ວນ ຫຼື ທັງໝົດ ຖືກເຊື່ອມຕໍ່ປະສານຮ່ວມເຂົ້າກັນ ຢູ່ໃນ ແລະ/ຫຼື ຢູ່ເທິງວັດຖຸເຄິ່ງຕົວນຳ ແລະ ຜະລິດຕະພັນນັ້ນ ມີຈຸດປະສົງປະຕິບັດໜ້າທີ່ ທາງດ້ານເອເລັກໂຕຣນິກ;
8. **ນັກອອກແບບ** ໝາຍເຖິງບຸກຄົນ ຫຼື ກຸ່ມຄົນ, ທີ່ຮ່ວມກັນອອກແບບຜັງວົງຈອນລວມໃດໜຶ່ງ;
9. **ການໂອນສິດ** ໝາຍເຖິງການໂອນສິດບາງສ່ວນ ຫຼື ທັງໝົດຂອງເຈົ້າຂອງແບບຜັງວົງຈອນລວມ ໃຫ້ແກ່ຜູ້ຮັບສິດ;
10. **ການແຍກຄຳຮ້ອງ** ໝາຍເຖິງ ຜູ້ຮ້ອງຂໍໄດ້ແຍກຄຳຮ້ອງດຽວອອກເປັນສອງ ຫຼື ຫຼາຍສະບັບ ຊຶ່ງແຕ່ລະຄຳຮ້ອງທີ່ໄດ້ແຍກມານັ້ນຕ້ອງກ່ຽວຂ້ອງກັບແບບຜັງວົງຈອນລວມ ທີ່ຢູ່ໃນຄຳຮ້ອງຕົ້ນສະບັບ;
11. **ຜູ້ຖືສິດຫຼືເຈົ້າຂອງສິດ** ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີສິດຕາມກົດໝາຍຕໍ່ກັບແບບຜັງວົງຈອນລວມ ຫຼື ຜູ້ໄດ້ຮັບມອບສິດ ຫຼື ຜູ້ສືບທອດຜົນປະໂຫຍດຈາກບຸກຄົນດັ່ງກ່າວ;
12. **ການອະນຸຍາດນຳໃຊ້** ໝາຍເຖິງການຕົກລົງຂອງເຈົ້າຂອງສິດໃຫ້ຜູ້ອື່ນນຳໃຊ້ສິດຕໍ່ກັບແບບຜັງວົງຈອນລວມຂອງຕົນ ເພື່ອນຳໃຊ້ສະເພາະແຕ່ພຽງຜູ້ດຽວລວມທັງການຕົກລົງບໍ່ໃຫ້ດຳເນີນການທາງດ້ານກົດໝາຍ ຕໍ່ຜູ້ໄດ້ຮັບອະນຸຍາດນຳໃຊ້ດັ່ງກ່າວ ຖ້າປະຕິບັດຕາມເງື່ອນໄຂຂອງການຕົກລົງ;
13. **ຜູ້ອະນຸຍາດນຳໃຊ້** ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ອອກໃບອະນຸຍາດນຳໃຊ້ສິດ ຕໍ່ກັບແບບຜັງວົງຈອນລວມ;

14. **ຜູ້ໄດ້ຮັບອະນຸຍາດນຳໃຊ້** ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບສິດນຳໃຊ້ຈາກເຈົ້າຂອງສິດຕໍ່ກັບແບບຜັງວົງຈອນລວມ;

15. **ໃບມອບສິດ** ໝາຍເຖິງເອກະສານທີ່ເປັນລາຍລັກອັກສອນ ຊຶ່ງເຈົ້າຂອງສິດໄດ້ມອບສິດຂອງຕົນ ໃຫ້ບຸກຄົນໜຶ່ງຫຼື ຫຼາຍຄົນ ປະຕິບັດໜ້າທີ່ແທນຕົນ;
16. **ຜູ້ມອບສິດ** ໝາຍເຖິງເຈົ້າຂອງແບບຜັງວົງຈອນລວມ ທີ່ມອບສິດຂອງຕົນໃຫ້ບຸກຄົນໜຶ່ງ ຫຼື ຫຼາຍຄົນປະຕິບັດໜ້າທີ່ແທນຕົນ ໃນການຍື່ນຄຳຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ຫຼື ດຳເນີນການອື່ນໆ ນຳກົມຊັບສິນທາງປັນຍາ;
17. **ຜູ້ຕາງໜ້າ** ໝາຍເຖິງທະນາຍຄວາມ ຫຼື ຕົວແທນ ທີ່ໄດ້ຮັບອະນຸຍາດຈາກເຈົ້າຂອງແບບຜັງວົງຈອນລວມ ໃນການຍື່ນຄຳຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ຫຼື ດຳເນີນການອື່ນໆ ນຳກົມຊັບສິນທາງປັນຍາ.

**ມາດຕາ 4 ບຸກຄົນທີ່ມີສິດໄດ້ຮັບການປົກປ້ອງແບບຜັງວົງຈອນລວມ**

ບຸກຄົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາມີສິດ ໄດ້ຮັບການປົກປ້ອງແບບຜັງວົງຈອນລວມ, ໄດ້ຮັບໃບຢັ້ງຢືນການຈົດທະບຽນ, ຕໍ່ອາຍຸໃບຢັ້ງຢືນການຈົດທະບຽນ, ດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ, ຮ້ອງຟ້ອງຕໍ່ສານປະຊາຊົນ ແລະ ດຳເນີນການເຄື່ອນໄຫວອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

## ໝວດທີ 2
## ການຈົດທະບຽນແບບຜັງວົງຈອນລວມ

**ມາດຕາ 5 ເງື່ອນໄຂທີ່ສາມາດໄດ້ຮັບໃບຢັ້ງຢືນການຈົດທະບຽນແບບຜັງວົງຈອນລວມ**

ສິ່ງທີ່ສາມາດໄດ້ຮັບໃບຢັ້ງຢືນແບບຜັງວົງຈອນລວມ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ເປັນແບບຜັງຕົ້ນສະບັບ ທີ່ບໍ່ຄືແບບຜັງຂອງບຸກຄົນອື່ນ ຊຶ່ງເປັນແບບທີ່ເກີດມາຈາກສະຕິປັນຍາຂອງຜູ້ສ້າງ ແລະ ເປັນສິ່ງທີ່ໂດດເດັ່ນ ໃນວົງການນັກສ້າງແຜນຜັງວົງຈອນລວມ ແລະ ຜູ້ຜະລິດວົງຈອນລວມ ໃນເວລາສ້າງແບບຜັງດັ່ງກ່າວ;
2. ເປັນແບບຜັງທີ່ປະກອບດ້ວຍການປະສານຮ່ວມກັນ ລະຫວ່າງ ສ່ວນປະກອບ ແລະ ສ່ວນເຊື່ອມຕໍ່ ຊຶ່ງໂດຍທົ່ວໄປແລ້ວຈະຕ້ອງໄດ້ຮັບການປົກປ້ອງ ໂດຍສະເພາະໃນກໍລະນີ ທີ່ມີການຕອບສະໜອງເງື່ອນໄຂຂອງຂໍ້ທີ 1;
3. ການຍື່ນຄຳຮ້ອງຂໍຈົດທະບຽນ ຕ້ອງຍື່ນກ່ອນວັນທີນຳເອົາແບບຜັງວົງຈອນລວມ ໄປສະແຫວງຫາຜົນປະໂຫຍດ ແລະ ໃຊ້ໃນທາງການຄ້າໃນທົ່ວໂລກ ໂດຍເຈົ້າຂອງ ຫຼື ພາຍໃນສອງປີ ນັບແຕ່ວັນໄດ້ສະແຫວງຫາຜົນປະໂຫຍດເປັນຕົ້ນໄປ. ໃນກໍລະນີ ຫາກບໍ່ໄດ້ມີການນຳໃຊ້ແບບຜັງວົງຈອນລວມອອກສະແຫວງຫາຜົນປະໂຫຍດໃນທາງການຄ້າ, ຜູ້ຍື່ນຄຳຮ້ອງຂໍຕ້ອງຍື່ນພາຍໃນເວລາ ສິບຫ້າປີ ນັບແຕ່ວັນທີສ້າງແບບຜັງວົງຈອນນັ້ນເປັນຕົ້ນມາ.

ສຳລັບແບບຜັງວົງຈອນລວມທີ່ບໍ່ສາມາດໄດ້ຮັບການຈົດທະບຽນ ແມ່ນໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ.